# ສິດທິພິເສດທາງດ້ານການຄ້າ GSP-98% ທີ່ ສປ ຈີນ ໃຫ້ແກ່ ສປປ ລາວ

## 1. ຄວາມເປັນມາ

ສິດທິພິເສດທາງດ້ານການຄ້າ **GSP-98%** ຫຼື ສິດທິພິເສດໃນການຍົກເວັ້ນພາສີ ແລະ ໂຄຕ້າ (**DFQF-98%)** ແມ່ນນະໂຍບາຍພິເສດຂອງ ສປ ຈີນ ໃຫ້ແກ່ປະເທດດ້ອຍພັດທະນາ 46 ປະເທດໃນໂລກພາຍໃຕ້ພັນທະໃນຂອບອົງການການຄ້າໂລກ, ປະຈຸບັນມີ 41 ປະເທດ ໄດ້ສິດທິພິເສດດັ່ງກ່າວແລ້ວ. ສປປ ລາວ ໄດ້ຮັບສິດທິພິເສດທາງດ້ານການຄ້າ **GSP-97%** ໃນວັນທີ 01.12.2020 ໂດຍໄດ້ຮັບການລົບລ້າງພາສີຈໍານວນ 8,256 ລາຍການ ແລະ ສິນຄ້າອ່ອນໄຫວຈໍານວນ 293 ລາຍການ. ເພື່ອເປັນການເພີ່ມທະວີການຮ່ວມມື ດ້ານເສດຖະກິດ ແລະ ການຄ້າລະຫວ່າງ ລາວ-ຈີນ, ທັງສອງຝ່າຍໄດ້ຮ່ວມກັນລົງນາມສານແລກປ່ຽນການກັບການຍົກລະດັບການໃຫ້ສິດທິພິເສດທາງດ້ານການຄ້າຈາກ 97% ມາເປັນ 98% ຫລື ຈາກຈໍານວນ 8,256 ລາຍການສິນຄ້າມາເປັນ 8,930 ລາຍການ, ສິນຄ້າອ່ອນໄຫວຈໍານວນ 144 ລາຍການ ເຊິ່ງມີຜົນບັງຄັບໃຊ້ນັບແຕ່ວັນທີ 01 ກັນຍາ 2022 ເປັນຕົ້ນມາ.

## 2. ປຽບທຽບອັດຕາພາສີພາຍໃຕ້ສິດທິພິເສດຕ່າງໆ

ຈາກຕາຕະລາງລຸ່ມນີ້ຈະເຫັນວ່າລະດັບການລົບລ້າງອັດຕາພາສີຂອງສິດທິພິເສດທາງດ້ານການຄ້າໃນຂອບຕ່າງໆລະຫວ່າງ ສປປ ລາວ ແລະ ສປ ຈີນ ເຫັນວ່າມີຄວາມແຕກຕ່າງກັນພໍສົມຄວນ. ໃນກອບອົງການການຄ້າໂລກມີລະດັບການເປີດ ຫລື ລາຍການທີ່ເປັນ 0% ພຽງແຕ່ 11.14%, ສິດທິພິເສດ GSP98% ມີລະດັບການເປີດ ຫລື ມີລາຍການສິນຄ້າທີເປັນ 0% ສູງເຖິງ 98.41% ຂອງລາຍການທັງໝົດ. ໂດຍມີຫມວດສິນຄ້າທີ່ຍັງບໍ່ເປັນ 0% ຈໍານວນ 144 ລາຍການສິນຄ້າ ໂດຍແມ່ນສິນຄ້າທີ່ຢູ່ໃນໝວດ 10, 15, 17, 24, 31, 40, 44, 48, 51, 52

| ຂອບການຄ້າ | ລາຍການ 0% | ລາຍການທີ່ບໍ່ແມ່ນ 0% | ເປີເຊັນລາຍການທີແມ່ນ 0% | ເປີເຊັນລາຍການທີ່ບໍ່ແມ່ນ 0% |
|---|---|---|---|---|
| MFN | 1,011 (HS2022) | 8,063 | 11.14% | 88.85% |
| ACFTA | 8,068 (HS2017) | 481 | 94.37% | 5.63% |
| GSP98% | 8,930 (HS2022) | 144 | 98.41% | 1.59% |
| RCEP | 5,968 (HS2022) | 3,106 | 65.77% | 34.23% |

## 3. ກົດລະບຽບແຫຼ່ງກໍາເນີດສິນຄ້າ

### 3.1 ຄວາມຫມາຍຂອງກົດລະບຽບແຫຼ່ງກໍາເນີດສິນຄ້າ

ລະບຽບແຫຼ່ງກໍາເນີດໝາຍເຖິງຂໍ້ກໍານົດ, ເງື່ອນໄຂທີ່ຢັ້ງຢືນແຫຼ່ງທີ່ມາຂອງສິນຄ້າວ່າມີຕົ້ນກໍາເນີດ ຫຼື ຜະລິດມາຈາກປະເທດໃດ. ແຫຼ່ງກໍາເນີດສິນຄ້າມີຄວາມສໍາຄັນໃນການກໍານົດເງື່ອນໄຂໃນການນໍາໃຊ້ສິດທິພິເສດທາງການຄ້າເພື່ອຫຼຸດຜ່ອນອັດຕາພາສີນໍາເຂົ້າຖ້າສິນຄ້າທີ່ບໍ່ຜ່ານເງື່ອນໄຂແຫຼ່ງກໍາເນີດສິນຄ້າ, ສິນຄ້ານັ້ນຈະບໍ່ ສາມາດຮັບສິດທິພິເສດທາງດ້ານອັດຕາພາສີ ພາຍໃຕ້ສັນຍານັ້ນໆ.

### 3.2 ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ

ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ໝາຍເຖິງ ເອກະສານທີ່ຢັ້ງຢືນບ່ອນທີ່ສິນຄ້າໄດ້ເກີດຂຶ້ນ ຫຼື ໄດ້ຜ່ານຂະບວນການຜະລິດຂຶ້ນ ອອກໃຫ້ໂດຍເຈົ້າໜ້າທີ່ຂອງລັດ ຫຼື ໜ່ວຍງານໃດໜຶ່ງທີ່ອົງການຂອງລັດແຕ່ງຕັ້ງມອບໝາຍສິດໃຫ້ເປັນຜູ້ຢັ້ງຢືນແຫຼ່ງກໍາເນີດສິນຄ້າຂອງປະເທດຜູ້ສົ່ງອອກ. ເອກະສານ ດັ່ງກ່າວນໍາໃຊ້ເພື່ອເປັນການອ້າງອີງໃນການຂໍຍົກເວັ້ນ ຫຼື ຫຼຸດຜ່ອນອັດຕາພາສີນໍາເຂົ້າຈາກປະເທດຜູ້ນໍາເຂົ້າສິນຄ້າ. ສໍາລັບແບບພິມສິດທິພິເສດທາງການຄ້າແບບຝ່າຍດຽວຂອງ ສປ ຈີນ GSP98% (CO-China) ສາມາດຂໍໄດ້ທີ່ ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງ

ອຸດສາຫະກໍາ ແລະ ການຄ້າ ຫຼື ທ່ານໃດສົນໃຈສາມາດເຂົ້າໄປດາວໂຫຼດເບິ່ງເອກະສານຕ່າງໆທີ່ກ່ຽວຂ້ອງຕາມລິ້ງຕໍ່ໄປນີ້: https://www. laotradeportal.gov.la/index.php?r=site/display&id=2178.

3.3 ເງື່ອນໄຂແຫຼ່ງກໍາເນີດສິນຄ້າ

ເງື່ອນໄຂແຫຼ່ງກໍາເນີດສິນຄ້າແມ່ນການກໍານົດ ຫຼື ການວາງເງື່ອນໄຂຂອງການຜະລິດສິນຄ້າ. ໂດຍລວມແລ້ວ ເງື່ອນໄຂໄດ້ແຫຼ່ງກໍາເນີດສິນຄ້າມີ 2 ປະເພດ ຄື: (1) ສິນຄ້າທີ່ໄດ້ມາ ຫຼື ຜະລິດຂຶ້ນໂດຍໃຊ້ວັດຖຸດິບພາຍໃນປະເທດທັງໝົດ; ແລະ (2) ສິນຄ້າທີ່ໄດ້ມາ ຫຼື ຜະລິດຂຶ້ນໂດຍບໍ່ໄດ້ໃຊ້ວັດຖຸດິບພາຍໃນປະເທດທັງໝົດ.

ສິນຄ້າຕໍ່ໄປນີ້ ໃຫ້ຖືວ່າເປັນສິນຄ້າທີ່ໄດ້ມາ ຫຼື ຜະລິດຂຶ້ນໂດຍໃຊ້ວັດຖຸດິບພາຍໃນປະເທດທັງໝົດ ແລະເປັນສິນຄ້າທີ່ໄດ້ແຫຼ່ງກໍາເນີດໂດຍອັດຕະໂນມັດ:

| **ຂໍ້** | **ລາຍລະອຽດ** |
|---|---|
| 1 | ພືດ ແລະຜະລິດຕະພັນຈາກພືດ ທີ່ເກີດ, ປູກ ແລະເກັບກ່ຽວ ຢູ່ພາຍໃນປະເທດ; |
| 2 | ສັດມີຊີວິດ ທີ່ເກີດ ແລະລ້ຽງ ຢູ່ພາຍໃນປະເທດ; |
| 3 | ຜະລິດຕະພັນທີ່ໄດ້ຈາກສັດມີຊີວິດ ຕາມຂໍ້ (2); |
| 4 | ຜະລິດຕະພັນທີ່ໄດ້ຈາກການລ່າສັດ, ການຫ້າງແຮ້ວ, ການປະມົງ, ການລ້ຽງສັດນໍ້າ, ການຈັບ ຫຼື ການຫາໄດ້ ຢູ່ພາຍໃນປະເທດ |
| 5 | ແຮ່ທາດ ແລະວັດຖຸດິບ ທີ່ເກີດຂຶ້ນເອງຕາມທໍາມະຊາດ ຊຶ່ງບໍ່ໄດ້ລວມເອົາຂໍ້ (1) ເຖິງ (4) ທີ່ໄດ້ມາຈາກພື້ນດິນ, ພື້ນນໍ້າ ຫຼື ພື້ນທະເລຂອງປະເທດ; |
| 6 | ຜະລິດຕະພັນຈາກການປະມົງທາງທະເລ ແລະ ຜະລິດຕະພັນອື່ນໆ ທີ່ຫາໄດ້ຈາກທະເລຫຼວງ ໂດຍເຮືອທີ່ຈົດທະບຽນ ແລະປັກທຸງຂອງປະເທດກ່ຽວຂ້ອງນັ້ນ; |
| 7 | ຜະລິດຕະພັນທີ່ໄດ້ມາ ຫຼື ຜະລິດໃນໂຮງງານຢູ່ເທິງເຮືອ ຈາກຜະລິດຕະພັນທີ່ກ່າວໄວ້ໃນຂໍ້ (6) ຖ້າວ່າເຮືອນັ້ນຫາກຈົດທະບຽນ ແລະ ປັກທຸງຂອງປະເທດກ່ຽວຂ້ອງ; |
| 8 | ຜະລິດຕະພັນທີ່ໄດ້ຈາກພື້ນນໍ້າ ຫຼືພື້ນທະເລນອກເຂດນ່ານນໍ້າຂອງປະເທດຜູ້ສົ່ງອອກ ໃນກໍລະນີມີສິດໃຊ້ປະໂຫຍດ ຕາມສົນທິສັນຍາສາກົນ; |
| 9 | ສິ່ງເສດເຫຼືອຈາກການຜະລິດ ຫຼືສິ່ງຂອງທີ່ໃຊ້ແລ້ວ ຊຶ່ງເກັບໄດ້ພາຍໃນປະເທດ ແລະ ເໝາະສໍາລັບໃຊ້ເປັນວັດຖຸດິບຄືນໃໝ່; |
| 10 | ສິນຄ້າທີ່ໄດ້ຜະລິດໃນປະເທດນັ້ນ ຈາກຜະລິດຕະພັນທີ່ໄດ້ກ່າວໄວ້ໃນຂໍ້ (1) ເຖິງ (9). |

ຂະບວນການຜະລິດ ຫຼື ການປຸ່ງແຕ່ງຮູບພຽງເລັກໜ້ອຍຂອງສິນຄ້າ ຈະບໍ່ຖືວ່າບັນລຸເງື່ອນໄຂແຫຼ່ງກໍາເນີດສິນຄ້າ:

| ຂໍ້ | ລາຍລະອຽດ |
|---|---|
| 1 | ການດໍາເນີນງານ ຫຼື ຂະບວນການເພື່ອຮັບປະກັນການເກັບຮັກສາສິນຄ້າໃຫ້ຢູ່ສະພາບດີເພື່ອຈຸດປະສົງການຂົນສົ່ງ ຫຼື ການເກັບຮັກສາ; |
| 2 | ການປະກອບແບບງ່າຍດາຍຂອງຊິ້ນສ່ວນເພື່ອປະກອບໃຫ້ສົມບູນ ຫຼື ແຍກສ່ວນເພື່ອປະກອບເຂົ້າໄປ; |
| 3 | ການປ່ຽນແປງການຫຸ້ມຫໍ່, ການເອົາຫຸ້ມຫໍ່ອອກ ຫຼື ປະກອບການຫຸ້ມຫໍ່ |
| 4 | ການລ້າງ, ທໍາຄວາມສະອາດ, ລ້າງຂີ້ຝຸ່ນ, ການ oxide, ຕື່ມນໍ້າມັນ, ທາສີ ຫຼືອື່ນໆ; |
| 5 | ການລີດ ຫຼື ອັດຂອງແຜ່ນແພ ຫຼື ຜະລິດຕະພັນແຜ່ນແພ |
| 6 | ການທາສີ ຫຼື ຂັດແບບງ່າຍດາຍ; |

| | |
|---|---|
| 7 | ການສີ, ການຟອກບາງສ່ວນ ຫຼື ທັງຫມົດ, ຂັດ, ແລະ ການເຄືອບຂອງອາຫານປະເພດເມັດ ແລະ ເຂົ້າ; |
| 8 | ຂະບວນການຟອກສີນໍ້າຕານ, ເພື່ອເພີ່ມລົດຊາດ, ຫຼື ເຮັດນໍ້າຕານກ້ອນ, ເຮັດເປັນຜົງບາງສ່ວນ ຫຼື ທັງຫມົດ; |
| 9 | ການປອກເປືອກ ແລະ ເອົາແກນ ແລະ ແກະອອກຈາກຫມາກໄມ້, ຫມາກຖົ່ວ ແລະ ຜັກ; |
| 10 | ເຮັດໃຫ້ແຫລວມ, ບົດ ຫຼື ຕັດແບບງ່າຍ; |
| 11 | ການຂູດ, ຄັດ, ຈັດລຽນ, ການຈັດປະເພດ, ການຈັດລຳດັບ, ການຈັບຄູ່ (ລວມທັງການລວມສິນຄ້າທີ່ກຳນົດໄວ້), ການຕັດຂາດ, ບົດ, ດັດ, ແກະອອກ; |
| 12 | ການວາງແບບງ່າຍໆໃນແກ້ວ, ກະປ໋ອງ,ຖົງ, ຖົງ, ກະເປົາ, ກ່ອງ; ການແກ້ໄຂບັດ ຫຼື ກະດານ; ແລະ ການດຳເນີນງານການຫຸ້ມຫໍ່ແບບງ່າຍທັງຫມົດ; |
| 13 | ການຕິດ ຫຼື ພິມເຄື່ອງໝາຍ, ປ້າຍ, ໂລໂກ້ ແລະ ອື່ນໆ ແຍກສັນຍາລັກເທິງຜະລິດຕະພັນ ຫຼືການຫຸ້ມຫໍ່ຂອງເຂົາເຈົ້າ; |
| 14 | ການຜະສົມແບບງ່າຍຂອງຜະລິດຕະພັນ, ບໍ່ວ່າຈະຕ່າງ ຫລື ບໍ່ຕ່າງປະເພດກັນ; ຜະສົມໃສ່ນ້ຳຕານກັບ ວັດຖຸດິບອື່ນໆ |
| 15 | ການທົດສອບ ຫຼື ການປັບທຽບ; |
| 16 | ພຽງແຕ່ເຈືອຈາງດ້ວຍນໍ້າ ຫຼື ສານອື່ນໆ, ເຊິ່ງບໍ່ປ່ຽນແປງລັກສະນະຂອງສິນຄ້າ; |
| 17 | ຕາກໃຫ້ແຫ້ງ, ໃສ່ເກືອ (ຫຼື ດອງເຄັມ); ແຊ່ແຂັງ ຫລື ແຊ່; |
| 18 | ການຂ້າສັດ; |
| 19 | ການປະສົມປະຕິບັດການຕັ້ງແຕ່ສອງ ຫຼື ຫຼາຍກວ່າທີ່ລະບຸໄວ້ໃນຂໍ້ (1) ຫາຂໍ້ (18) |

### 4. ການສະສົມມູນຄ່າພາກພື້ນ ແລະ ການປ່ຽນລະຫັດພາສີເຄົ້າ

ສຳລັບສິນຄ້າທີ່ບໍ່ໄດ້ມາ ຫຼື ຜະລິດຂຶ້ນໂດຍນໍາໃຊ້ວັດຖຸດິບທີ່ໄດ້ມາທັງໝົດ ແຕ່ສາມາດຜ່ານເງື່ອນໄຂການປ່ຽນແປງຮູບແບບຢ່າງພຽງພໍ ຫຼື ເຕັມສ່ວນ (Substantial Transformation), ການປ່ຽນແປງຮູບແບບຢ່າງພຽງພໍ ຫຼື ເຕັມສ່ວນ ເກີດຂຶ້ນເມື່ອມີການນຳເຂົ້າວັດຖຸດິບ ຫຼື ຊິ້ນສ່ວນຕ່າງໆ ເພື່ອນຳມາຜະລິດເປັນສິນຄ້າໃໝ່ ຫຼື ຕ່າງກັນ ແລະ ມີລັກສະນະການປ່ຽນແປງຮູບແບບຢ່າງເຕັມສ່ວນ. ກົດການປ່ຽນແປງຮູບແບບຢ່າງພຽງພໍ ຫຼື ເຕັມສ່ວນ ປະກອບມີດັ່ງນີ້:

- ກົດອັດຕາສ່ວນມູນຄ່າສ້າງຂຶ້ນພາຍໃນພາກພື້ນ (Regional Value Content: RVC): ແມ່ນການສ້າງມູນຄ່າເພີ່ມພາຍໃນ ຊຶ່ງສ່ວນໃຫ່ຍແມ່ນກຳນົດໃຫ້ມີການສ້າງມູນຄ່າເພີ່ມບໍ່ຫຼຸດ 40 % ໂດຍກົດອັດຕາສ່ວນມູນຄ່າສ້າງຂຶ້ນພາຍໃນພາກພື້ນສາມາດນຳວັດຖຸດິບຈາກປະເທດຄູ່ຮ່ວມສັນຍາເຂົ້າມາຄິດໄລ່ RVC ໄດ້ແຕ່ຕ້ອງມີໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຄັດຕິດ;

ການຄິດໄລ່ມູນຄ່າເພີ່ມ (RVC) ມີດັ່ງນີ້:

$$RVC=(V-VNM)/V\times100\%$$

ໂດຍທີ່:

V ແມ່ນການດຳເນີນການຊຳລະຂອງມູນຄ່າສິນຄ້າ ທີ່ຖືກດັດແກ້ບົນພື້ນຖານຂອງລາຄາ FOB ທີ່ສອດຄ່ອງກັບສັນຍາການກຳນົດມູນຄ່າແຈ້ງພາສີ

VNM ແມ່ນມູນຄ່າຂອງວັດຖຸດິບທີ່ບໍ່ມີແຫຼ່ງກຳເນີດສິນຄ້າ. VNM ຈະເປັນຄ່າໃຊ້ຈ່າຍຂອງການນຳເຂົ້າ, ການຂົນສົ່ງ ແລະ ການປະກັນໄພສຳລັບການຂົນສົ່ງໄປຫາທ່າເຮືອປາຍທາງ ຫຼື ສະຖານທີ່, ລວມທັງມູນຄ່າຂອງວັດຖຸດິບບໍ່ມີ

ແຫຼ່ງກຳເນີດສິນຄ້າ. ໃນເວລາທີ່ຜູ້ຜະລິດຂອງສິນຄ້າໄດ້ຮັບອຸປະກອນທີ່ບໍ່ແມ່ນຕົ້ນກຳເນີດໃນອານາເຂດຂອງປະເທດທີ່ໄດ້ຮັບຜົນປະໂຫຍດ, ມູນຄ່າການເຮັດທຸລະກຳຂອງວັດຖຸດິບດັ່ງກ່າວ, ອີງຕາມສັນຍາການປະເມີນມູນຄ່າພາສີ, ຈະບໍ່ລວມເອົາຄ່າຂົນສົ່ງ, ການປະກັນໄພ, ຄ່າໃຊ້ຈ່າຍໃນການຫຸ້ມຫໍ່ ແລະ ຄ່າໃຊ້ຈ່າຍອື່ນໆເກີດຂຶ້ນໃນການຂົນສົ່ງວັດສະດຸຈາກຄັງສິນຄ້າກໄປຫາສະຖານທີ່ຜູ້ຜະລິດ.

- ກົດການປ່ຽນແປງລະຫັດພາສີ (Change in Tariff Classification: CTC): ກົດລະບຽບນີ້ແມ່ນນຳໃຊ້ສຳລັບວັດຖຸດິບທີ່ບໍ່ມີແຫຼ່ງກຳເນີດສິນຄ້າ ໂດຍການປ່ຽນແປງຮູບແບບລະຫັດພາສີ ໂດຍການປ່ຽນລະຫັດພາສີເຄົ້າ 04 ຕົວເລກ (Change Tariff Heading 04 digit: CTH).

**<u>ຂໍ້ມູນອ້າງອີງ</u>**


- ກະຊວງອຸດສາຫະກຳ ແລະ ການຄ້າ. (2020). ການຈັດຕັ້ງປະຕິບັດອອກໃບຢັ້ງຢືນແຫລກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສປ ຈີນ (GSP 97%) ແລະ ການເຂົ້າເປັນສະມາຊິກສົມບູນຂອງປະເທດມົງໂກລີ ພາຍໃຕ້ຂອບສັນຍາການຄ້າອາຊີ-ປາຊີຟິກ (APTA), ເລກທີ 2390/ຫອຄ.ກຂອລົງວັນທີ 31 ທັນວາ 2020.
- ແຈ້ງການຍົກລະດັບການໃຫ້ສິດທິພິເສດທາງດ້ານການຄ້າແບບຝ່າຍດຽວຂອງ ສປ ຈີນຈາກ GSP97% ມາເປັນ GSP98%, ເລກທີ 1871/ຫອຄ ລົງວັນທີ 13 ກັນຍາ 2022.
- ພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ. (2021). ສະຖິຕິການນຳເຂົ້າ ແລະ ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າຂອງ ສປປ ລາວ, ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.
- Lao PDR Trade Portal. (2022). ຄຳຖາມທີ່ມັກຖາມປະຈຳ (FAQ). ແຫລ່ງທີ່ມາ https://www.laotradeportal.gov.la/index.php?r=site/display&id=547 (2022).
- Rule of Origin and Related Implementation Procedure on Goods Eligible for Special Preference Treatment. Retrieved from https://www.laotradeportal.gov.la/kcfinder/upload/files/ROO_RULE_OF_SPT_97%25.pdf